ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ **1828** /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 12 MAY 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອໍານວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈໍາກັດ,
ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 02/2026.

- ອີງຕາມ ຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 02/2026, ວັນທີ 11 ພຶດສະພາ 2026 ມີລາຍລະອຽດລຸ່ມນີ້:

1. ອະນຸມັດ ບົດລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດ, ລວມທັງບົດລາຍງານການເງິນ ປະຈໍາໄຕມາດ 1 ປີ 2026.
2. ອະນຸມັດ ການສ້າງຂໍ້ກໍານົດວ່າດ້ວຍ ລະບຽບການຄຸ້ມຄອງ ແລະ ນໍາໃຊ້ຄັງສໍາຮອງ ຂອງ ຜ-ຟຟລ.
3. ຮັບຮອງ ນະໂຍບາຍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງບໍລິສັດ (ສະບັບປັບປຸງ ຄັ້ງທີ 3).

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄໍາ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la